VIENTIANE CENTER
ວຽງຈັນເຊັ້ນເຕີ
ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
VIENTIANE CENTER LAO PUBLIC COMPANY
ຖະໜົນຄຸວຽງ, ບ້ານໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂທ ແລະ ແຟັກ: (+856) 21 228299
KHUVIENG ROAD, NONGCHAN VILLAGE, SISATTANAK DISTRICT, VIENTIANE CAPITAL, Tel & Fax: (+856) 21 228299

ບົດລາຍງານການເຄື່ອນໄຫວທຸລະກິດ
6 ເດືອນຕົ້ນປີ 2025
ຂອງບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ

1. ຂໍ້ມູນກ່ຽວກັບບໍລິສັດ

1.1 ວິໄສທັດ

ວຈຊຕ ມຸ່ງໝັ້ນ ການສ້າງແບຣນສູນການຄ້າອັນດັບໜຶ່ງຢູ່ລາວ, ເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງການເງິນແລະ ສູນກາງການວາງສະແດງຂອງປະເທດລາວ.

1.2 ພາລະກິດ

ນຳເອົາວິຖີຊີວິດແບບຕົວເມືອງທີ່ເຕັມໄປດ້ວຍຄວາມສຸກໃຫ້ແກ່ປະເທດລາວ.

1.3 ແນະນຳບໍລິສັດ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ສ້າງຕັ້ງຂຶ້ນຢ່າງເປັນທາງການໃນວັນທີ 30 ພະຈິກ 2017 ໂດຍບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອຈຳກັດ ທີ່ຮ່ວມກັນສ້າງຕັ້ງຂຶ້ນລະຫວ່າງກຸ່ມບໍລິສັດກໍ່ສ້າງລົງທຶນ ແລະ ຖືຮຸ້ນແຂວງຢຸນນານ ຈຳກັດ ແລະ ກຸ່ມບໍລິສັດ ກຣິດຕະພິງ ຈຳກັດ.ບໍລິສັດໄດ້ສຳເລັດການຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການໃນວັນທີ 31 ພຶດສະພາ 2019(ຊື່ຫຼັກຊັບ“VCL”).

ກິດຈະການຫຼັກຂອງບໍລິສັດແມ່ນພັດທະນາອະສັງຫາລິມະຊັບສະເພາະດ້ານປະເພດອາຄານເພື່ອໃຫ້ເຊົ່າ-ຂາຍ, ທຸລະກິດຂອງ ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນປະກອບດ້ວຍ ການເກັບຄ່າເຊົ່າພື້ນທີ່ໃນສູນການຄ້າ ວຽງຈັນເຊັນເຕີ ແລະ ຫັກເອົາເປີເຊັນຕາມຍອດຂາຍເປັນຄ່າບໍລິຫານສູນການຄ້າ, ການຈັດງານວາງສະແດງເຊິ່ງເປັນກຳມະສິດພ້ອມທັງບໍລິຫານພື້ນທີ່ວາງສະແດງດ້ວຍການເກັບຄ່າເຊົ່າ, ການເກັບຄ່າເຊົ່າປ້າຍໂຄສະນາ, ການເກັບຄ່າເຊົ່າສຳນັກງານຫ້ອງການ .

ໂດຍຜ່ານການສ້າງເປັນແບຣນຂອງຕົນ ເພີ່ມປະສິດທິພາບໃນວຽກງານການບໍລິການ ປັບປຸງຮູບແບບການດຳເນີນທຸລະກິດ, ສູນການຄ້າ ແລະ ສຳນັກງານຫ້ອງການໄດ້ດຶງດູດທຸລະກິດທີ່ມີຊື່ສຽງເຊັ່ນ: ທະນາຄານແຫ່ງ ສປ ຈີນ, ຮ້ານມິນິໂຊ, ໂຮງໜັງ MAJOR ແລະວິສາຫະກິດຕ່າງປະເທດຂະໜາດໃຫຍ່ ເຊັ່ນ: ບໍລິສັດໄຟຟ້າເກົາຫຼີ, ບໍລິສັດ ປະກັນຊີວິດພຸ ເດັນໂຊ,ບໍລິສັດ DKSH ໄດ້ເຂົ້າມາເຊົ່າພື້ນທີ່ຮ້ານຄ້າ ແລະ ອາຄານສຳນັກງານ ຂອງບໍລິສັດ ວຽງຈັນເຊີນເຕີ ລາວ ມະຫາຊົນ. ມາເຖິງປະຈຸບັນ ວຽງຈັນເຊີນເຕີ ໄດ້ຄ່ອຍໆກາຍເປັນສູນກາງການຄ້າ, ສູນກາງສຳນັກງານ, ສູນກາງທາງດ້ານການເງິນ ແລະສູນກາງການຈັດງານວາງສະແດງສິນຄ້າໃນລາວ, ເປັນແບຣນສູນການຄ້າອັນດັບໜຶ່ງຢູ່ລາວ ແລະ ຕົວແບບການຮ່ວມມື ຂອງລັດຖະບານສອງຊາດລາວ-ຈີນ.

1.4 ຂໍ້ມູນທົ່ວໄປຂອງບໍລິສັດ

1.4.1 ທີ່ຕັ້ງ

ສຳນັກງານຂອງ ວຈຊຕ ຕັ້ງຢູ່ຖະໜົນຄູວຽງ, ບ້ານໜອງຈັນ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ.

1.4.2 ຕິດຕໍ່ ແລະ ພົວພັນ

ເບີໂທ (+856-21) 228299

ແຟັກ (+856-21) 228299

ເວັບໄຊ: http://www.vcplao.com/

1.4.3 ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 30/06/2025 ແມ່ນ 147.199.900.000 ກີບ.

1.4.4 ຂໍ້ມູນກ່ຽວກັບຜູ້ຖືຮຸ້ນ

ລາຍຊື່ຜູ້ຖືຮຸ້ນລາຍໃຫຍ່ ຂອງ ວຈຊຕ ທີ່ຖືຮຸ້ນແຕ່ 5 ສ່ວນຮ້ອຍຂຶ້ນໄປນະວັນທີ 01 ສິງຫາ 2025 ໄດ້ແກ່:

(1) ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນ ໜອງຈັນຕອນເໜືອຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 95.999.200ຮຸ້ນ ເທົ່າກັບ 65,22% ຂອງຈຳນວນຮຸ້ນທັງໝົດ.

(2) ບໍລິສັດຫຼັກຊັບ ລາວ-ຈີນ ຈຳກັດ ຈຳນວນຮຸ້ນທີ່ຖືຄອງແມ່ນ 49.747.500 ຮຸ້ນເທົ່າກັບ 33,79% ຂອງຈຳນວນຮຸ້ນທັງໝົດ.

2. ການດຳເນີນທຸລະກິດທີ່ສຳຄັນ ແລະ ຂໍ້ມູນສຳຄັນທາງການເງິນຂອງບໍລິສັດ

2.1 ການດຳເນີນທຸລະກິດທີ່ສຳຄັນຂອງບໍລິສັດ

ມາຮອດວັນທີ 30 ມິຖຸນາ 2025, ມີຜູ້ເຊົ່າຮ້ານຄ້າຈຳນວນ 10 ຮ້ານ , ກວມພື້ນທີ່ເຊົ່າ 97%; ມີລູກຄ້າເຂົ້າເຊົ່າ ອາຄານສຳນັກງານຈຳນວນ 23 ບໍລິສັດ , ກວມພື້ນທີ່ເຊົ່າ 90%.

ດ້ານການເຄື່ອນໄຫວຈັດກິດຈະກຳ ໃນໄລຍະຫົກເດືອນຕົ້ນປີ 2025 ໄດ້ຈັດງານກິດຈະກຳຕ່າງໆຂະໜາດໃຫຍ່ ແລະ ຂະໜາດກາງທັງໝົດ 27 ຄັ້ງ. ກໍຄື ງານ Travel Fair, ງານບຸນປີໃໝ່ລາວ, ການແຂ່ງຂັນຊິງກາເຟ, ງານວັນເດັກນ້ອຍ ສາກົນ, ກິດຈະກຳສຳພັດວັດທະນະທຳເກົ່າຫຼີ, ງານ Maker Fair ຄັ້ງທຳອິດໃນລາວ, ກອງປະຊຸມສົ່ງເສີມຜະລິດຕະພັນ ລາວ-ຈີນ ປີ 2025, Vientiane Center Healthy Care ເປັນຕົ້ນ ແລະ ຍັງໄດ້ຈັດງານເປີດໂຕຢ່າງເປັນທາງການຂອງ

ບໍລິສັດ Vientiane Jarern Sport Travel, ຜ່ານການຜັນຂະຫຍາຍຮູບແບບທຸລະກິດທີ່ຫຼາກຫຼາຍ ແລະ ການຕະຫຼາດທີ່ກົງຈຸດ ໄດ້ຊ່ວຍປັບປຸງຄວາມນິຍົມ ແລະ ອິດທິພົນຕໍ່ສູນການຄ້າຢ່າງມີປະສິດທິພາບ.

2.2 ຄວາມສ່ຽງທີ່ອາດຈະປະເຊີນໜ້າ

ໃນດ້ານທຸລະກິດສູນການຄ້າ, ອັນທີໜຶ່ງການຂະຫຍາຍຕົວຂອງພື້ນທີ່ການຄ້າ ແລະ ຮ້ານຄ້າໃນນະຄອນຫຼວງວຽງຈັນ ສູງກ່ວາກຳລັງການຂະຫຍາຍຕົວຂອງບໍລິໂພກ ແລະ ກຳລັງການຊື້, ເຊິ່ງເຮັດໃຫ້ພື້ນທີ່ການຄ້າໃນນະຄອນຫຼວງວຽງຈັນ ແລະ ບັນດາເຂດອ້ອມຂ້າງວຽງຈັນເຊັນເຕີ ມີຈຳນວນຫຼວງຫຼາຍເກີນໄປ. ອັນທີສອງ ອາຄານສູນການຄ້າເລີ່ມເກົ່າປ່ຽນແປງຕາມອາຍຸການໃຊ້ງານ, ເຮັດໃຫ້ການດຶງແຂຣນລະດັບສູງຍາກຂຶ້ນ,ສົ່ງຜົນກະທົບໂດຍລວມຕໍ່ການປະສານງານຂອງສູນການຄ້າ, ອັນທີສາມ, ແຫຼ່ງການລົງທຶນ ແລະ ການຮ່ວມມືຂອງສູນການຄ້າແມ່ນຈຳກັດສະເພາະທຸລະກິດໃນທ້ອງຖິ່ນຂອງລາວ, ຂາດຄວາມສາມາດໃນການເຂົ້າຫາຊ່ອງທາງລູກຄ້າຈາກຈີນ ແລະ ປະເທດອື່ນໆ. ໂດຍລວມແລ້ວ, ສູນການຄ້າຕ້ອງເພີ່ມທະວີການປັບປຸງດ້ານຍີ່ຫໍ້, ປັບປຸງປະສິດທິຜົນການດຳເນີນງານ ແລະ ສ້າງການແຂ່ງຂັນທີ່ແຕກຕ່າງໃຫ້ເຂັ້ມແຂງຂຶ້ນ.

ໃນດ້ານທຸລະກິດອາຄານຫ້ອງການ, ອັນດັບທຳອິດ ສະພາບແວດລ້ອມໂດຍລວມຂອງບາງຊັ້ນຈຳເປັນຕ້ອງໄດ້ຮັບການປັບປຸງຢ່າງຮີບດ່ວນ,ແຮງຈູງໃຈໃນການເຂົ້າເຊົ່າຂອງລູກຄ້າຍັງຕ່ຳ,ດັ່ງນັ້ນຈຶ່ງຈຳເປັນຕ້ອງມີການລົງທຶນເພີ່ມເຕີມເພື່ອປັບປຸງສະພາບແວດລ້ອມສາທາລະນະເພື່ອດຶງດູດລູກຄ້າ,ອັນທີສອງ ໃນໄລຍະຜ່ານມານີ້ ການເພີ່ມຂຶ້ນຂອງການສະໜອງອາຄານສຳນັກງານໃໝ່ໃນນະຄອນຫຼວງວຽງຈັນ ເຮັດໃຫ້ມີການແຂ່ງຂັນທີ່ສູງຂຶ້ນ ແລະ ຄວາມກົດດັນດ້ານການຫຼຸດລາຄາໝັກຂຶ້ນຢ່ງຕໍ່ເນື່ອງ.

ໂດຍທົ່ວໄປ, ການດຳເນີນງານຂອງພາກສ່ວນອາຄານຫ້ອງການແມ່ນຖືກຈຳກັດໂດຍປັດໃຈເຊັ່ນ: ຂະໜາດຂອງຕົວເມືອງໃນລາວ, ລະດັບປະຊາກອນ ແລະ ການບໍລິໂພກ, ການແຂ່ງຂັນທີ່ຮຸນແຮງຈາກພາກສ່ວນອື່ນອ້ອມຂ້າງ, ວົງຈອນການສິ່ງເສີມການລົງທຶນໄດ້ຖືກຂະຫຍາຍອອກໄປ ແລະ ມີຄວາມສ່ຽງທີ່ຜົນການດຳເນີນງານຈະບໍເປັນໄປຕາມຄາດຫວັງ.

2.3 ຂໍ້ມູນທາງດ້ານການເງິນທີ່ສຳຄັນໃນໄລຍະຫົກເດືອນຕົ້ນປີ 2024

2.3.1 ລາຍຮັບ

ຮອດວັນທີ 30 ມິຖຸນາ 2025, ບໍລິສັດບັນລຸລາຍຮັບທັງໝົດ 12.049.784.200,00 ກີບ, ທຽບໃສ່ໄລຍະດຽວກັນຂອງປີ 2024 ແມ່ນເພີ່ມຂຶ້ນ 11,86%. ໃນນັ້ນ, ລາຍຮັບຄ່າເຊົ່າຮ້ານ 4.281.222.114,00 ກີບ, ລາຍຮັບຄ່າເຊົ່າຫ້ອງການ 6.624.427.112,00 ກີບ, ລາຍຮັບການຮ່ວມທຸລະກິດ 749.638.291,00 ກີບ, ລາຍຮັບຄ່າເຊົ່າສະຖານທີ່ຈັດງານ

251.626.583,00 ກີບ, ລາຍຮັບຄ່າເຊົ່າປ້າຍໂຄສະນາ 134.862.459,00 ກີບ,ລາຍຮັບດອກເບ້ຍ 8.007.641,00 ກີບ.

ເຫດຜົນສຳລັບການເພີ່ມຂຶ້ນຂອງລາຍຮັບການດຳເນີນງານໃນໄລຍະຫົກເດືອນຕົ້ນປີ 2025: ປັດໃຈທີໜຶ່ງແມ່ນ ການເຄື່ອນໄຫວຕະຫຼາດໃນລາວແລະປະເທດອ້ອມຂ້າງເພີ່ມຂຶ້ນຢ່າງຫຼວງຫຼາຍ, ບໍລິສັດໄດ້ເພີ່ມຄວາມພະຍາຍາມສົ່ງເສີມ ການຕະຫຼາດ, ສິ່ງຜົນໂດຍກົງເຮັດໃຫ້ລາຍຮັບຂອງທຸລະກິດແຕ່ລະພາກສ່ວນເພີ່ມຂຶ້ນ;ປັດໃຈທີສອງ, ການອ່ອນຄ່າຂອງເງິນ ກີບຂ້ອນຂ້າງຮ້າຍແຮງ, ສັນຍາລາຍຮັບສ່ວນໃຫຍ່ທີ່ບໍລິສັດລົງນາມແມ່ນເປັນເງິນໂດລາສະຫະລັດ, ດັ່ງນັ້ນຜົນກະທົບແມ່ນ ຂ້ອນຂ້າງໜ້ອຍ.ປັດໃຈທີສາມ ສູນການຄ້າໄດ້ຜັນຂະຫຍາຍຍຸດທະສາດການຕະຫຼາດຢ່າງສຳເລັດຜົນ, ເຊັ່ນການຈັດ ກິດຈະກຳສົ່ງເສີມການຂາຍ ແລະ ການສະເຫຼີມສະຫຼອງເທດສະການຕ່າງໆ, ຊຶ່ງສາມາດດຶງດູດລູກຄ້າໃຫ້ຫຼາຍຂຶ້ນ. ປັດໃຈທີ ສີ່ ສູນການຄ້າໄດ້ນຳເຂົ້າຍີ່ຫໍ້ຫຼືຮ້ານຄ້າຍອດນິຍົມ, ໄດ້ສ້າງລາຍຮັບຈາກຄ່າເຊົ່າ ແລະ ຍອດຂາຍໂດຍກົງ ເຮັດໃຫ້ລາຍຮັບຂອງ ສູນການຄ້າເພີ່ມຂຶ້ນ. ປັດໃຈທີຫ້າ ຜ່ານການວິເຄາະຂໍ້ມູນ, ໄດ້ປັບປຸງຮູບແບບຮ້ານ ແລະ ການຈັດວາງສິນຄ້າໃຫ້ເໝາະສົມ ເພື່ອສ້າງຄວາມປະທັບໃຈໃນການຊື້ຂອງລູກຄ້າໃຫ້ສູງຂຶ້ນ, ສົ່ງຜົນໃຫ້ການໄຫຼວຽນຂອງລູກຄ້າແລະ ການຈັບຈ່າຍໃຊ້ສອຍ ເພີ່ມຂຶ້ນ.

2.3.2 ກຳໄລ ແລະ ຂາດທຶນ

ຮອດວັນທີ 30 ມິຖຸນາ 2025, ຄ່າໃຊ້ຈ່າຍໃນການດຳເນີນງານຂອງບໍລິສັດແມ່ນ 5.035.119.379,00 ກີບ, ທຽບໃສ່ໄລຍະດຽວກັນປີ 2024 ຫຼຸດລົງ 14,44%, ເຫດຜົນຕົ້ນຕໍແມ່ນວ່າ ໃນປີ 2024 ມີຄ່າໃຊ້ຈ່າຍຄັ້ງດຽວ ຫຼື ຊົ່ວຄາວ (ເຊັ່ນ: ຄ່າການບຳລຸງຮັກສາ, ຄ່າກິດຈະກຳສົ່ງເສີມການຂາຍ ແລະ ຄ່າບໍລິການ), ແຕ່ບໍ່ມີຄ່າໃຊ້ຈ່າຍດັ່ງກ່າວໃນປີ 2025, ເຊິ່ງເຮັດໃຫ້ຄ່າໃຊ້ຈ່າຍໃນການດຳເນີນງານຫຼຸດລົງ, ກຳໄລກ່ອນເສຍອາກອນ 10.071.833.664,00 ກີບ, ລາຍຈ່າຍ ອາກອນລາຍໄດ້ 1.379.467.630,00ກີບ, ກຳໄລສຸດທິ 8.692.366.034,00ກີບ, ທຽບໃສ່ປີຜ່ານມາເພີ່ມຂຶ້ນ 137,55%.

ເຫດຜົນການເພີ່ມຂຶ້ນ ຂອງກຳໄລສຸດທິ: ໃນຊ່ວງໄລຍະຫົກເດືອນຕົ້ນປີ 2025, ບໍລິສັດໄດ້ຂາຍຊັບສິນເພື່ອການ ລົງທຶນ, ສ້າງລາຍໄດ້ຈາກການຈຳໜ່າຍຊັບສິນດັ່ງກ່າວ, ເຮັດໃຫ້ກຳໄລສຸດທິຂອງບໍລິສັດເພີ່ມຂຶ້ນ.

2.3.3 ຊັບສິນທັງໝົດ

ຮອດວັນທີ 30 ມິຖຸນາ 2025, ຊັບສິນທັງໝົດຂອງບໍລິສັດແມ່ນ 342.945.113.371,00 ກີບ,ທຽບໃສ່ໄລຍະດຽວ

ກັນຂອງປີ 2024 ເພີ່ມຂຶ້ນ 2,03%.

ສາເຫດທີ່ເພີ່ມຂຶ້ນ: ອັດຕາການເຂົ້າເຊົ້າພື້ນທີ່ຂອງສູນການຄ້າ ແລະ ອາກາຄານຫ້ອງການເພີ່ມຂຶ້ນ, ສິ່ງຜົນໃຫ້ລາຍໄດ້ຈາກການເຊົ່າເພີ່ມຂຶ້ນ, ແລະ ຊັບສິນທັງຫາມົດຂອງບໍລິສັດແມ່ນເພີ່ມຂຶ້ນໂດຍທາງອ້ອມ..

2.3.4 ໜີ້ສິນທັງໝົດ

ຮອດວັນທີ 30 ມິຖຸນາ 2025, ໜີ້ສິນທັງໝົດຂອງບໍລິສັດແມ່ນ 52.107.462.017,00 ກີບ, ທຽບໃສ່ໄລຍະດຽວກັນຂອງປີ 2024 ຫຼຸດລົງ 2,21%.

ສາເຫດທີ່ໜີ້ສິນຫຼຸດລົງ: ໃນໄລຍະຊ່ວງຫົກເດືອນຕົ້ນປີບໍລິສັດມີການຊໍາລະຄ່າວ່າຈ້າງການບໍລິຫານຊັບສິນ,ຄ່າໃຊ້ຈ່າຍອື່ນໆທີ່ຕ້ອງຈ່າຍຫຼຸດລົງ,ເຮັດໃຫ້ໜີ້ສິນຫຼຸດລົງ.

3.ໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານ ແລະ ຄະນະກໍາມະການ

3.1 ສະພາບໍລິຫານ

3.1.1 ສະມາຊິກສະພາບໍລິຫານ

ສະພາບໍລິຫານບໍລິສັດວຽງຈັນເຊັນເຕີລາວມະຫາຊົນປະກອບດ້ວຍ 11 ທ່ານ:

- ທ່ານ ເຫີ ຈຸນ (Mr. He Jun) ເປັນປະທານ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ນາງ ອໍລະໄທ ສັນຕິຄົງຄາ ເປັນຮອງປະທານ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ບຸລະພາ ສັນຕິຄົງຄາ ເປັນສະມາຊິກ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຫວັງເຫວີຍຄຸນ (Mr. WangWeikun) ເປັນສະມາຊິກ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ເປັນສະມາຊິກ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຫຼໍ່ສ້ຽວດົງ (Mr. LuoXiaodong) ເປັນສະມາຊິກ; ຈໍານວນຫຸ້ນທີ່ຖືຄອງ: 5000 ; ຄ່າຕອບແທນ: 0
- ທ່ານ ເຫຼີ ຢ້າວຫ້າຍ(Mr. Lei Yaohai) ເປັນສະມາຊິກ; ຈໍານວນຫຸ້ນທີ່ຖືຄອງ: 4900 ; ຄ່າຕອບແທນ: 0
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ເປັນສະມາຊິກອິດສະຫຼະ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຈ່າງ ທຽນຢີ(Ms. ZhangTianyi) ເປັນສະມາຊິກອິດສະຫຼະ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ວຽງສະຫວັນ ພັນທະລີ ເປັນສະມາຊິກອິດສະຫຼະ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0
- ທ່ານ ຈໍຊົ່ງ ບົວສີເນັ່ງມາ ເປັນສະມາຊິກອິດສະຫຼະ; ຈໍານວນຫຸ້ນທີ່ຖືຄອງ: 0 ; ຄ່າຕອບແທນ: 0

3.1.2 ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

（1）ທ່ານ ເຫີ ຈຸນ (Mr. He Jun)



- ສັນຊາດ:ຈີນ
- ວັນເດືອນປີເກີດ: 11/04/1989
- ພາສາ: ຈີນ
- ຕຳແໜ່ງ:ປະທານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຢູນນານ,ສາຂາບໍລິຫານທຸລະກິດ.

（2）ທ່ານນາງອໍລະໄທສັນຕິຄົງຄາ



- ສັນຊາດ:ລາວ
- ວັນເດືອນປີເກີດ: 21/01/1979
- ພາສາ: ລາວ,ໄທ
- ຕຳແໜ່ງ:ຮອງປະທານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລແຫ່ງຊາດລາວ, ສາຂາບໍລິຫານທຸລະກິດ.

（3）ທ່ານບຸລະພາສັນຕິຄົງຄາ



- ສັນຊາດ:ລາວ
- ວັນເດືອນປີເກີດ: 06/02/1967
- ພາສາ: ຈີນ,ລາວ
- ຕຳແໜ່ງ:ເປັນສະມາຊິກ
- ປະຫວັດການສຶກສາ: ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລຫວາໝານຫຼີກົງ ຈີນ, ສາຂາບໍລິຫານທຸລະກິດ.

（4）ທ່ານຫວັງເຫວີຍຄຸນ(Mr. Wang Weikun)



- ສັນຊາດ:ຈີນ
- ວັນເດືອນປີເກີດ: 15/05/1984
- ພາສາ: ຈີນ,ອັງກິດ
- ຕຳແໜ່ງ:ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານການບໍລິຫານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລເສດຖະກິດການຄ້າຕ່າງປະເທດ ຈີນ, ສາຂາການເງິນ,ລະດັບປະລິນຍາໂທຢູ່ມະຫາວິທະຍາໄລວາຊິດາ ຍີ່ປຸ່ນ, ສາຂາການພົວພັນສາກົນ.

（5）ທ່ານ ອຸ່ ຊິງຫວາ (Mr. Wu Xinghua)



- ສັນຊາດ:ຈີນ
- ວັນເດືອນປີເກີດ:09/01/1984
- ພາສາ: ຈີນ, ອັງກິດ,ລາວ, ໄທ
- ຕຳແໜ່ງ:ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານປະຕິບັດການ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລອັດສັມຊັ່ນ(AssumptionThai), ສາຂາບໍລິຫານທຸລະກິດ.

（6）ທ່ານ ຫຼໍ ສ້ຽວດົ້ງ(Mr. Luo Xiaodong)



- ສັນຊາດ:ຈີນ
- ວັນເດືອນປີເກີດ:07/03/1989
- ພາສາ:ຈີນ
- ຕຳແໜ່ງ:ເປັນສະມາຊິກ,ປະທານເຈົ້າໜ້າທີ່ດ້ານການເງິນ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາຕີຢູ່ມະຫາວິທະຍາໄລການເງິນ ແຂວງຢູນນານ ຈີນ, ສາຂາການເງິນ-ບັນຊີ.

（7）ທ່ານເຫຼີຍຢ້າວຫ້າຍ(Mr. Lei Yaohai)



- ສັນຊາດ:ຈີນ
- ວັນເດືອນປີເກີດ:28/11/1984
- ພາສາ: ຈີນ
- ຕຳແໜ່ງ:ເປັນສະມາຊິກ, ເລຂານຸການສະພາບໍລິຫານ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລຂອນແກ່ນ ປະເທດໄທ, ສາຂາບໍລິຫານທຸລະກິດ.

（8）ທ່ານສ່ຽວໂຢງ(Mr. Xiao Yong)



- ສັນຊາດ:ຈີນ
- ວັນເດືອນປີເກີດ: 02/07/1977
- ພາສາ:ຈີນ
- ຕຳແໜ່ງ:ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ວິທະຍາໄລການເງິນ ແຂວງຊານຕົ໋ງ ສປຈີນ, ສາຂາການເງິນ.

（9）ທ່ານຈ່າງທຽນຢີ(Ms. Zhang Tianyi)



- ສັນຊາດ:ຈີນ
- ວັນເດືອນປີເກີດ: 25/10/1976
- ພາສາ:ຈີນ
- ຕຳແໜ່ງ:ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລ ແຂວງຢຸນນານ ສປຈີນ, ສາຂາກົດໝາຍ.

（10）ທ່ານວຽງສະຫວັນພັນທະລີ



- ສັນຊາດ:ລາວ
- ວັນເດືອນປີເກີດ: 25/01/1976
- ພາສາ:ລາວ, ອັງກິດ,ໄທ
- ຕຳແໜ່ງ:ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລວໍຊິງຕັນ ອາເມລິກາສາຂາກົດໝາຍວ່າ

ດ້ວຍບໍລິສັດ ແລະ ກົດໝາຍຫຼັກຊັບ.

（11）ທ່ານຈໍຊິ໋ງ ບົວສີເນ່ັ່ງມາ



- ສັນຊາດ:ລາວ
- ວັນເດືອນປີເກີດ: 15/12/1972
- ພາສາ: ລາວ, ອັງກິດ,ໄທ, ຈີນ
- ຕຳແໜ່ງ:ເປັນສະມາຊິກອິດສະຫຼະ
- ປະຫວັດການສຶກສາ:ຈົບການສຶກສາລະດັບປະລິນຍາໂທຢູ່ມະຫາວິທະຍາໄລປະຊາຊົນຈີນ, ສາຂາບໍລິຫານທຸລະກິດ.

3.2 ຄະນະກາມາການຂອງສະພາບໍລິຫານ

3.2.1 ຄະນະອຳນວຍການ

- ທ່ານ ຫວັ ເຫວີຍຄຸນ (Mr. Wang Weikun) ປະທານຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການບໍລິຫານ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານປະຕິບັດການ
- ທ່ານ ຫຼໍ ສ່ຽວຕົ໋ງ (Mr. Luo Xiaodong) ຄະນະອຳນວຍການ/ປະທານເຈົ້າໜ້າທີ່ດ້ານການເງິນ

3. 3.2. ຄະນະກຳມະການກວດສອບ

- ທ່ານ ຈໍຊິ໋ງ ບົວສີເນ່ັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການກວດສອບ
- ທ່ານ ເຫີ ຈຸນ (Mr. He Jun) ສະມາຊິກ/ສະມາຊິກຄະນະກຳມະການກວດສອບ
- ທ່ານ ສ່ຽວ ໂຢ໋ງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກວດສອບ

3.2.3 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

- ທ່ານ ວຽງສະຫວັນ ພັນທະລີ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ
- ທ່ານ ບຸລະພາ ສັນຕິຖິງຄາ ສະມາຊິກ/ສະມາຊິກຄະນະກຳມະການຄຸ້ມຄອງຄວາມສ່ຽງ

3.2.4 ຄະນະກຳມະການຄັດເລືອກ

- ທ່ານ ຈໍຊິ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານຄະນະກຳມະການຄັດເລືອກ
- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການຄັດເລືອກ
- ທ່ານ ບຸລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການຄັດເລືອກ

3.2.5 ຄະນະກຳມະການກຳນົດຄ່າຕອບແທນ

- ທ່ານ ຈ່າງ ທຽນຢີ້ (Ms. Zhang Tianyi) ສະມາຊິກອິດສະຫຼະ/ປະທານຄະນະກຳມະການກຳນົດຄ່າຕອບແທນ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ
- ທ່ານ ອູ່ ຊິງຫວາ (Mr. Wu Xinghua) ສະມາຊິກ/ສະມາຊິກຄະນະກຳມະການກຳນົດຄ່າຕອບແທນ

3.2.6 ຄະນະກຳມະການລາຍການທີ່ກ່ຽວພັນ

- ທ່ານ ຈໍຊິ່ງ ບົວສີເມັ່ງມາ ສະມາຊິກອິດສະຫຼະ/ປະທານ ຄະນະກຳມະການລາຍການທີ່ກ່ຽວພັນ
- ທ່ານ ບຸລະພາ ສັນຕິຄົງຄາ ສະມາຊິກ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ
- ທ່ານ ສ່ຽວ ໂຢງ (Mr. Xiao Yong) ສະມາຊິກອິດສະຫຼະ/ສະມາຊິກຄະນະກຳມະການລາຍການທີ່ກ່ຽວພັນ

3.3 ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.3.1 ໄລຍະຫົກເດືອນຕົ້ນປີ 2025, ສະພາບໍລິຫານໄດ້ຈັດກອງປະຊຸມທັງໝົດ 4 ຄັ້ງ.

3.3.2 ໃນໄລຍະຫົກເດືອນຕົ້ນປີ 2025 ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມຂຶ້ນ 2 ຄັ້ງ, ເພື່ອທົບທວນບົດລາຍງານການເງິນປະຈຳປີ 2023 ຂອງບໍລິສັດ, ບົດລາຍງານການເງິນໄຕມາດທີ 1 ປີ 2024,ເພື່ອຮັບປະກັນຄວາມຖືກຕ້ອງໃນການເປີດເຜີຍຂໍ້ມູນບົດລາຍງານການເງິນຂອງບໍລິສັດ.

3.3.3 ຄະນະກຳມະການລາຍການທີ່ກ່ຽວພັນຂອງບໍລິສັດ ໄດ້ປະຊຸມ 1 ຄັ້ງ, ເພື່ອທົບທວນສອງລາຍການທີ່ກ່ຽວພັນຂອງບໍລິສັດ,ໃຫ້ຄວາມຄິດເຫັນອ້າງອີງແກ່ຜູ້ຕັດສິນໃຈ ໃນການພິຈາລະນາ ແລະ ອະນຸມັດລາຍການທີ່ກ່ຽວພັນດັ່ງກ່າວ.

4. ຄວາມຮັບຜິດຊອບໃນສັງຄົມ

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ໄດ້ຊຳລະອາກອນຢ່າງຖືກຕ້ອງຕາມກົດໝາຍ,ໃນໄລຍະຫົກເດືອນຕົ້ນປີ 2025 ໄດ້ມອບອາກອນທັງໝົດ 1.196.297.100,00 ກີບ, ດັ່ງລາຍລະອຽດລຸ່ມນີ້:

ລຳດັບ	ລາຍການ	ຈຳນວນເງິນ(ສິບພັນກີບ)	
		ໄລຍະຫົກເດືອນຕົ້ນປີ 2025	ໄລຍະຫົກເດືອນຕົ້ນປີ 2024
1	ອາກອນກຳໄລ	-	-
2	ອາກອນມູນຄ່າເພີ່ມ	117.240,72	5.360,69
3	ອາກອນລາຍໄດ້	2.388,99	2.121,71
4	ອາກອນອື່ນໆ	-	-
ລວມ		119.629,71	7.382,40

5.ວຽກງານຮັກສາຄວາມສຳພັນກັບນັກລົງທຶນ

ໃນວັນທີ 29 ພຶດສະພາ 2025,ວຽງຈັນເຊັ້ນເຕີ ໄດ້ເຂົ້າຮ່ວມກອງປະຊຸມພົບປະນັກລົງທຶນ ທີ່ຕະຫຼາດຫຼັກຊັບລາວ ຈັດຂຶ້ນໂດຍສຸມໃສ່ການນຳສະເໜີພາບລວມຂອງບໍລິສັດ, ທຸລະກິດຕົ້ນຕໍ, ໂຄງປະກອບການຈັດຕັ້ງ, ຍຸດທະສາດການພັດທະນາແລະແຜນທຸລະກິດປີ 2025, ຄວາມຮັບຜິດຊອບຕໍ່ສັງຄົມແລະຂໍ້ມູນທາງດ້ານການເງິນທີ່ສຳຄັນຂອງບໍລິສັດໃນປີ 2024 ເປັນຕົ້ນ.

6. ລາຍການທີ່ກ່ຽວພັນ

ໃນໄລຍະຫົກເດືອນຕົ້ນປີ 2025, ບໍລິສັດມີລາຍການທີ່ກ່ຽວພັນ 1 ລາຍການດັ່ງຕໍ່ໄປນີ້:

ການວ່າຈ້າງບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອ ຈຳກັດເປັນຜູ້ຮັບຜິດຊອບການຊອກຫາລູກຄ້າ ແລະ ບໍລິຫານຊັບສິນຕ່າງໆ.

ລາຍການດັ່ງກ່າວແມ່ນຢູ່ໃນຂອບເຂດສິດອຳນາດການຕັດສິນໃຈຂອງສະພາບໍລິຫານ, ຫຼັງຈາກຜ່ານການກວດກາ ໂດຍຄະນະກຳມະການຄຸ້ມຄອງລາຍການທີ່ກ່ຽວພັນ ຂອງບໍລິສັດແລ້ວ, ໄດ້ລາຍງານໃຫ້ສະພາບໍລິຫານຂອງບໍລິສັດທົບທວນ ແລະ ອະນຸມັດໃນວັນທີ 9 ມີນາ 2025. ມະຕິດັ່ງກ່າວໄດ້ເປີດເຜີຍຢູ່ໃນເວັບໄຊຂອງຕະຫຼາດຫຼັກຊັບລາວ.

ສະມາຊິກສະພາບໍລິຫານ/ປະທານຄະນະອຳນວຍການ

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ Vientiane Center Lao Public Company

Wang Wei Kun